**ບັນດາປະເທດທີ່ພວມເຕີບໃຫ່ຍໃນທະວີບອາຊີ  ຈຳເປັນຕ້ອງມີນະໂຍບາຍເສດຖະກິດມະຫາພາກແບບຮອບຄອບທີ່ເຂັ້ມແຂງກ່ວາເກົ່າ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ແລະ ການເພີ່ມຂຶ້ນຂອງ Fintech**

ນະຄອນປາຣີ, ວັນທີ 29 ເດືອນມີຖຸນາ ປີ 2021 - ສູນພັດທະນາ OECD ໄດ້ກ່າວໄວ້ໃນບົດລາຍງານຂອງຕົນກ່ຽວກັບ *ການສ້າງຄວາມເຂັ້ມແຂງດ້ານນະໂຍບາຍເສດຖະກິດມະຫາພາກແບບຮອບຄອບໃນບັນດາປະເທດທີ່ພວມເຕີບໃຫ່ຍໃນທະວີບອາຊີ: ການປັບຕົວກັບເປົ້າໝາຍສີຂຽວ ແລະ Fintech* ທີ່ໄດ້ອອກເຜີຍແຜ່ ໃນມື້ນີ້ ວ່າ: "ນະໂຍບາຍເສດຖະກິດມະຫາພາກແບບຮອບຄອບ (Macroprudential policy) ພວມເພີ່ມຂຶ້ນໃນບັນດາປະເທດທີ່ພວມເຕີບໃຫຍ່ໃນທະວີບອາຊີ, ແລະ ມັນມີບົດບາດສຳ ຄັນໃນການສະໜັບສະໜູນການຫັນປ່ຽນໄປສູ່ເສດຖະກິດກາກບອນຕໍ່າ ແລະ ແບບດິຈິຕອນ".

ບົດລາຍງານດັ່ງກ່າວໄດ້ສະ ເໜີພາບລວມປະສົບການຂອງພາກພື້ນກ່ຽວກັບນະໂຍບາຍເສດຖະກິດມະຫາພາກແບບຮອບຄອບ ຊຶ່ງເປັນບັນດາມາດຕະການທີ່ແນໃສ່ຫຼຸດຜ່ອນຄວາມສ່ຽງແບບເປັນລະບົບ ແລະ ຮັກສາສະຖຽນລະພາບຂອງລະບົບການເງິນ ນັບຕັ້ງແຕ່ກາງຊຸມປີ 1990 ເປັນຕົ້ນມາ. ບັນດາອົງການດ້ານນະໂຍບາຍໃນບັນດາປະເທດທີ່ພວມເຕີບໃຫຍ່ໃນທະວີບອາຊີໄດ້ປະກາດໃຊ້ມາດຕະການຕ່າງໆດັ່ງກ່າວ ຫຼັງຈາກເກີດວິກິດການອັນສຳຄັນດ້ານການເງິນ 2 ຄັ້ງ ຊຶ່ງສົ່ງຜົນກະທົບຕໍ່ພາກພື້ນດັ່ງກ່າວໃນທົດສະວັດທີ່ຜ່ານມາ. ຫວ່າງມໍ່ໆມານີ້, ຫຼາຍປະເທດໄດ້ຫັນການປະຕິຮູບລະບຽບການຂອງທະນາຄານ Basel III ເຂົ້າໃນນິຕິກຳລະດັບຊາດ ແລະ ໄດ້ປັບປຸງສະຖາບັນ ແລະ ການຕັ້ງຄ່າລະດັບມະຫາພາກແບບຮອບຄອບຂອງຕົນ.

ບົດລາຍງານໄດ້ກຳນົດສິ່ງທ້າທາຍຕົ້ນຕໍທີ່ອຳນາດການປົກຄອງໃນທະວີບອາຊີທີ່ພວມເຕີບໃຫຍ່ ອາດຈະປະສົບໃນການດຳເນີນນະໂຍບາຍດັ່ງກ່າວຢ່າງມີປະສິດທິຜົນ, ແລະ ໄດ້ກຳນົດຂໍ້ສະເໜີແນະຕ່າງໆ ເພື່ອຜ່ານຜ່າ ເຊັ່ນ: ເມື່ອປະເມີນປະສິດທິຜົນຂອງນະໂຍບາຍມະຫາພາກ, ໃຫ້ພິຈາລະນາຢ່າງລະອຽດກ່ຽວກັບການເຊື່ອມໂຍງທີ່ສັບສົນກັບນະໂຍບາຍການເງິນ; ຄຳນຶງເຖິງການເພີ່ມທະວີການຕິດຕໍ່ພົວພັນລະຫວ່າງຕົວກາງຂອງທະນາຄານ ແລະ ບໍ່ແມ່ນທະນາຄານ; ໃຫ້ພິຈາລະນາຢ່າງລະອຽດກ່ຽວກັບຜົນກະທົບຂ້າມຊາດ; ເປົ້າໝາຍດີທີ່ສຸດຂອງນະໂຍບາຍມະຫາພາກ ເພື່ອຫຼີກລຽງຄວາມອັນຕະລາຍດ້ານສິນທຳ; ປັດໃຈໃນຜົນຕາມມາຂອງວິກິດການໂຄວິດ-19; ການອອກແບບກອບວຽກຢ່າງລະມັດລະວັງເພື່ອວັດແທກຈຸດຢືນຂອງນະໂຍບາຍເສດຖະກິດມະຫາພາກຂອງປະເທດ.

ຄວາມສ່ຽງທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ອາດຈະເຮັດໃຫ້ລະບົບການເງິນໃນບັນດາປະເທດທີ່ພວມເຕີບໃຫຍ່ໃນທະວີບອາຊີສັ່ນສະເທືອນຢ່າງໜັກ. ດັ່ງນັ້ນ, ບັນດາທະນາຄານກາງຈຳເປັນຕ້ອງມີມາດຕະການແກ້ໄຂ ແລະ ຜູ້ວາງນະໂຍບາຍຈຳເປັນຕ້ອງປັບປຸງ ຫຼື ຂະຫຍາຍຊຸດເຄື່ອງມືນະໂຍບາຍເສດຖະກິດມະຫາພາກແບບຮອບຄອບ ເພື່ອແກ້ໄຂຄວາມສ່ຽງແບບເປັນລະບົບທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ, ແລະ ສະໜັບສະໜູນການລົງທຶນທີ່ມີກາກບອນຕໍ່າ. ທາງເລືອກດ້ານນະໂຍບາຍ ປະກອບມີການລວມເອົາຄວາມສ່ຽງທີ່ກ່ຽວຂ້ອງກັບດິນຟ້າອາກາດເຂົ້າໃນການທົດສອບຄວາມກົດດັນດ້ານເສດຖະກິດມະຫາພາກແບບຮອບຄອບ. ຍັງປະກອບມີເຄື່ອງມືທີ່ສາມາດຈຳກັດຢ່າງປະສິດທິຜົນຕໍ່ປະລິມານເງິນກູ້ຂອງທະນາຄານໃຫ້ແກ່ຂະແໜງການກາກບອນສູງ, ໃນຂະນະດຽວກັນ ກໍຫັນປ່ຽນເສັ້ນທາງການປ່ອຍສິນເຊື່ອໄປສູ່ການລົງທຶນທີ່ເປັນມິດກັບດິນຟ້າອາກາດ.

ການເພີ່ມຂຶ້ນຂອງເຕັກໂນໂລຢີການເງິນ –*Fintech*- ຍັງນຳເອົາສິ່ງທ້າທາຍໃໝ່, ລວມທັງ: ພຶດຕິກຳທີ່ສ່ຽງກ່ວາ; ການຜັນຜວນທີ່ເພີ່ມຂຶ້ນໃນຂະແໜງການ; ແລະ ຄວາມກະແຈກກະຈາຍ. ເພື່ອແກ້ໄຂບັນຫາດັ່ງກ່າວ, ບັນດາປະເທດທີ່ພວມເຕີບໃຫຍ່ໃນທະວີບອາຊີ ຄວນສ້າງຄວາມເຂັ້ມແຂງດ້ານນະໂຍບາຍເສດຖະກິດມະຫາພາກແບບຮອບຄອບ ເພື່ອນຳເອົາບັນດາບໍລິສັດ

Fintech ເຂົ້າມາໃນຂອບເຂດຂອງກົດລະບຽບ. ຍິ່ງໄປກວ່ານັ້ນ, ເພື່ອຫຼີກລຽງຄວາມສ່ຽງທີ່ກ່ຽວຂ້ອງກັບລັກສະນະຂ້າມຊາຍແດນຂອງກິດຈະກໍາ Fintech, ຜູ້ຄວບຄຸມດ້ານກົດລະບຽບ ຄວນເພີ່ມທະວີການຮ່ວມມືໂດຍຜ່ານການເຊື່ອມໂຍງກັນດ້ານກົດລະບຽບ.

ຂໍເຊີນຊວນບັນດານັກຂ່າວຕິດຕໍ່ພົວພັນກັບທ່ານ Kensuke Tanaka, ຫົວໜ້າກົມທະວີບອາຊີຂອງສູນພັດທະນາ OECD (Kensuke.Tanaka@oecd.org , +33 6 27 19 05 19), ຫຼື ທ່ານ Bochra Kriout ທີ່ຫ້ອງການຖະແຫຼງຂ່າວຂອງສູນພັດທະນາ OECD (Bochra.Kriout@oecd.org , +33 1 45 24 82 96).